**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເລກທີ 1945/ຫສນຍ

ນະຄອນຫຼວງວຽງຈັນ, ວັນທີ 16. 10. 2019

# ແຈ້ງການ

**ຮຽນ:** - ທ່ານ ລັດຖະມົນຕີ ກະຊວງການຕ່າງປະເທດ.
- ທ່ານ ເຈົ້າແຂວງ ແຂວງຜົ້ງສາລີ.
- ທ່ານ ເຈົ້າແຂວງ ແຂວງຫົວພັນ.
- ທ່ານ ເຈົ້າແຂວງ ແຂວງຊຽງຂວາງ.
- ທ່ານ ເຈົ້າແຂວງ ແຂວງໄຊຍະບູລີ.
- ທ່ານ ເຈົ້າແຂວງ ແຂວງຄຳມ່ວນ.
- ທ່ານ ເຈົ້າແຂວງ ແຂວງສະຫວັນນະເຂດ.
- ທ່ານ ເຈົ້າແຂວງ ແຂວງອັດຕະປື.

**ເລື່ອງ:** ການສະເໜີຂໍປິດການບໍລິການອອກວີຊາທັບດ່ານສາກົນຢູ່ບາງດ່ານສາກົນ.

- ອີງຕາມໜັງສືສະເໜີ ຂອງກະຊວງການຕ່າງປະເທດ ສະບັບເລກທີ 7170/ຕປທ ລົງວັນທີ 23 ກັນຍາ 2019.
- ອີງຕາມການຊີ້ນຳ ຂອງທ່ານ ນາຍົກລັດຖະມົນຕີ ລົງວັນທີ 09 ຕຸລາ 2019.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງການຊີ້ນຳຂອງທ່ານ ນາຍົກລັດຖະມົນຕີ ມາຍັງທ່ານຊາບ ດັ່ງນີ້:

**1) ເຫັນດີອະນຸມັດໃຫ້ປິດໜ່ວຍງານອອກວີຊາທັບດ່ານປະຈຳຢູ່ດ່ານສາກົນຈຳນວນ 09 ດ່ານຄື: ❶ ດ່ານສາກົນປາງຫົກ (ແຂວງຜົ້ງສາລີ); ❷ ດ່ານສາກົນນ້ຳໂສຍ (ແຂວງຫົວພັນ); ❸ ດ່ານສາກົນນ້ຳກັ່ນ (ແຂວງຊຽງຂວາງ); ❹ ດ່ານສາກົນນ້ຳເງິນ (ແຂວງໄຊຍະບູລີ); ❺ ດ່ານສາກົນຂົວມິດຕະພາບນ້ຳເຫືອງ (ແຂວງໄຊຍະບູລີ); ❻ ດ່ານສາກົນນ້ຳພາວ (ແຂວງຄຳມ່ວນ); ❼ ດ່ານສາກົນນາເພົ້າ (ແຂວງຄຳມ່ວນ); ❽ ດ່ານສາກົນສະໜາມບິນສະຫວັນນະເຂດ; ❾ ດ່ານສາກົນພູເກືອ (ແຂວງອັດຕະປື) ຕາມການສະເໜີ.**

**2) ມອບໃຫ້ກະຊວງການຕ່າງປະເທດ ເປັນໃຈກາງໃນການປະສານສົມທົບກັບບັນດາແຂວງກ່ຽວຂ້ອງຈັດຕັ້ງປະຕິບັດການປິດດ່ານຢູ່ແຕ່ລະດ່ານ ຕາມຂັ້ນຕອນທີ່ສະເໜີມານັ້ນໃຫ້ດີ ເພື່ອບໍ່ໃຫ້ຖືກທ່າຮັບ ແລະ ບໍ່ໃຫ້ມີຜົນກະທົບຕໍ່ຜູ້ທີ່ມີຄວາມປະສົງເຂົ້າວີຊາຢູ່ບັນດາດ່ານດັ່ງກ່າວ.**

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

**ລັດຖະມົນຕີ,**
**ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ.**

ເພັດ ພົມພິພັກ

**ບ່ອນນຳສົ່ງ:**

1. ທ່ານ ນາຍົກ-ຮອງນາຍົກລັດຖະມົນຕີ 04 ສະບັບ
2. ຫ້ອງວ່າການສູນກາງພັກ 01 ສະບັບ
3. ຄະນະ ຫສນຍ 06 ສະບັບ
4. ກົມເລຂາ 01 ສະບັບ
5. ສຳເນົາ 01 ສະບັບ